ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010101



ແນວຄິດກ່ຽວກັບການປົກຄອງທ້ອງຖິ່ນ ໃນນິພົນ ໄກສອນ ພົມວິຫານ
Local Administration based on Kaysone Phomvihane's Thought

ນ. ພຸດທະວັນ ສີລາວົງ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
E-mail: phudthawan@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ:15 ຕຸລາ 2025
ຈັດພິມອອນລາຍ: 24 ມິຖຸນາ 2026

ບົດຄັດຫຍໍ້:

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ຈຶ່ງມີເງື່ອນໄຂສ້າງລັດທີ່ສົມບູນແບບ, ໝາຍເຖິງລັດທີ່ມີອົງປະກອບອັນຄົບຖ້ວນສົມບູນ ຄື: ມີເຂດນ້ຳແດນດິນ, ປະຊາກອນ ແລະ ອຳນາດອະທິປະໄຕ ຊຶ່ງໜ້າທີ່ໃຈກາງແມ່ນນຳພາປວງຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ອັນນີ້ ມັນໄດ້ຊີ້ບອກໃຫ້ເຫັນວ່າພາລະບົດບາດ ແລະ ໜ້າທີ່ຂອງລັດ ໄດ້ມີການປ່ຽນແປງໄປຢ່າງເລິກເຊິ່ງ ແລະ ມີຄວາມຫຍຸ້ງຍາກຫຼາຍຂຶ້ນກວ່າເກົ່າ ຊຶ່ງມັນຮຽກຮ້ອງໃຫ້ຕ້ອງມີການຈັດລະບຽບການປົກຄອງລັດ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນທີ່ຖືກຕ້ອງ, ໂດຍສອດຄ່ອງກັບຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ແລະ ສະພາບ, ເງື່ອນໄຂຕົວຈິງຂອງປະເທດເຮົາ ໂດຍສະເພາະແມ່ນການປົກຄອງທ້ອງຖິ່ນ ເວົ້າລວມ; ເວົ້າສະເພາະແມ່ນການແບ່ງຂັ້ນຄຸ້ມຄອງ, ການຫັນການປົກຄອງທ້ອງຖິ່ນເຂົ້າສູ່ລະບຽບກົດໝາຍ ແລະ ປ່ຽນແປງໃໝ່ການປົກຄອງທ້ອງຖິ່ນຢູ່ ສປປ ລາວ.

ແນວຄິດກ່ຽວກັບການປົກຄອງທ້ອງຖິ່ນ ໃນນິພົນ ໄກສອນ ພົມວິຫານ ແມ່ນພື້ນຖານທິດສະດີ ແລະທັງເປັນການໝູນໃຊ້ທິດສະດີດັ່ງກ່າວຢ່າງມີວິທະຍາສາດ, ເປັນການສ້າງເງື່ອນໄຂຊຸກຍູ້ໃຫ້ອົງການບໍລິຫານລັດຂັ້ນທ້ອງຖິ່ນສາມາດເສີມຂະຫຍາຍບົດບາດ ແລະຄວາມເປັນເຈົ້າການຂອງຕົນ ໃນການຂຸດຄົ້ນທຸກທ່າແຮງບໍ່ມຊ້ອນຂອງທ້ອງຖິ່ນ ເພື່ອພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະປະກອບສ່ວນພັດທະນາປະເທດຊາດ. ດັ່ງນັ້ນ, ພວກເຮົາຕ້ອງສືບຕໍ່ຄົ້ນຄວ້າ, ສຶກສາຮໍ່ຳຮຽນ ແລະເສີມຂະຫຍາຍແນວຄິດໄກສອນ ພົມວິຫານກ່ຽວກັບການປົກຄອງທ້ອງຖິ່ນ ໃຫ້ອຸດົມສົມບູນ ແລະເປັນເຈົ້າການໃນການປະຕິບັດໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ເພື່ອຕອບສະໜອງກັບໜ້າທີ່ການເມືອງໃນໄລຍະໃໝ່ໃຫ້ມີຄຸນນະພາບສູງຂຶ້ນເລື່ອຍໆ.

ຄຳສັບສຳຄັນ: ແນວຄິດໄກສອນ ພົມວິຫານ, ການປົກຄອງທ້ອງຖິ່ນ, ການປ່ຽນແປງໃໝ່.

Abstract:

After the liberation and establishment of the Lao People's Democratic Republic on December 2, 1975, Laos gained the conditions to build a complete state with all the necessary components: territory, population, and sovereignty. The central task of this state was to lead the entire Lao population in implementing two strategic missions: protecting and developing the nation. This indicated a profound and increasingly challenging change in the role and duties of the state. It necessitated a proper reorganization of state governance at both central and local levels, consistent with the needs of socio-economic development and the actual conditions of the country. This is particularly true for local governance, encompassing decentralization, bringing local governance into compliance with the law, and reforming local governance in the Lao PDR.

The concept of local governance in Kaysone Phomvihane's works serves as both a theoretical foundation and a scientific application of that theory. It creates conditions to encourage local state administrative bodies to enhance their role and initiative in exploiting all the potential of the locality to develop the local socio-economic sphere and contribute to national development. Therefore, it is essential to continue researching, studying, and further developing Kaysone Phomvihane's concept of local governance to enrich it and to take initiative in performing duties with high responsibility to meet the political tasks of the new era with increasingly high quality.

Keywords: Kaysone Phomvihane's Thought, Local Administration, New Change .

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາ ເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນ ທີ 2 ທັນວາ 1975 ຈຶ່ງມີເງື່ອນໄຂສ້າງລັດທີ່ສົມບູນແບບ, ໝາຍເຖິງ ລັດທີ່ມີອົງປະກອບອັນຄົບຖ້ວນສົມບູນ ຄື: ມີເຂດນ້ຳແດນດິນ, ປະຊາ ກອນ ແລະ ອຳນາດອະທິປະໄຕ ຊຶ່ງໜ້າທີ່ໃຈກາງແມ່ນນຳພາ ປວງຊົນລາວທັງຊາດ ປະຕິບັດສອງໜ້າທີ່ຍຸດທະສາດແຫ່ງການປົກ ປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ອັນນີ້ ມັນໄດ້ຊີ້ບອກ ໃຫ້ເຫັນວ່າພາລະບົດບາດ ແລະ ໜ້າທີ່ຂອງລັດ ໄດ້ມີການປ່ຽນແປງ ໄປຢ່າງເລິກ ເຊິ່ງ ແລະ ມີຄວາມຫຍຸ້ງຍາກຫຼາຍຂຶ້ນກວ່າເກົ່າ ຊຶ່ງມັນ ຮຽກຮ້ອງໃຫ້ຕ້ອງມີການຈັດລະບຽບການປົກຄອງລັດ ທັງຢູ່ຂັ້ນສູນ ກາງ ແລະ ຂັ້ນທ້ອງຖິ່ນທີ່ຖືກຕ້ອງ, ໂດຍສອດຄ່ອງກັບຄວາມ ຕ້ອງການໃນການພັດ ທະນາເສດຖະກິດ-ສັງຄົມ ແລະ ສະພາບ, ເງື່ອນໄຂຕົວຈິງຂອງປະເທດເຮົາ ໂດຍສະເພາະແມ່ນການປົກຄອງ ທ້ອງຖິ່ນເວົ້າລວມ; ເວົ້າສະເພາະແມ່ນການແບ່ງຂັ້ນຄຸ້ມຄອງ, ການຫັນ ການປົກຄອງທ້ອງຖິ່ນເຂົ້າສູ່ລະບຽບກົດໝາຍ ແລະ ການປ່ຽນແປງໃ ໝ່ການປົກຄອງທ້ອງຖິ່ນຢູ່ ສປປ ລາວ, ໃນໄລຍະໃໝ່ຂອງການ ປະຕິວັດນີ້ປະທານ ໄກສອນ ພົມວິຫານ ຍັງຄົງສືບຕໍ່ອຸທິດຕົນຢ່າງເອົາ ຈິງເອົາຈັງ ພ້ອມທັງເປັນເຈົ້າການຮ່ວມກັບໝູ່ຄະນະໃນການຄົ້ນຄວ້າ ແນວທາງ ແລະ ນຳພາທົ່ວພັກ, ທົ່ວກຳລັງປະກອບອາວຸດ ແລະ ປະຊາຊົນລາວທັງຊາດ ຍາດໄດ້ໄຊຊະ ນະອັນໃຫຍ່ຫຼວງຫຼາຍປະການ ໃນພາລະກິດປົກປັກຮັກສາ ແລະ ສ້າງ ສາພັດທະນາປະເທດຊາດ. ດ້ວຍຈຸດພິເສດຂອງຜູ້ນຳທີ່ມີຄວາມສະ ຫຼຽວສະຫຼາດ, ມີໄຫວພິບ ແລະ ມີຄວາມສະດຸ້ງໄວຕໍ່ສະພາບການປ່ຽນແປງຂອງສາກົນ ແລະ ກຳແໜ້ນສະພາບຄວາມເປັນຈິງ ຂອງປະ ເທດຢ່າງເລິກເຊິ່ງເຖິງຖອງ, ປະທານ ໄກສອນ ພົມວິຫານ ໄດ້ເປັນຜູ້ນຳພາລິເລີ່ມການປ່ຽນແປງໃ ໝ່ ຊຶ່ງໄດ້ເຮັດໃຫ້ປະເທດຊາດຂອງພວກເຮົາໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງ, ປ່ຽນແປງໃຫ້ດີຂຶ້ນເປັນກ້າວໆ ສືບຕໍ່ຈົນມາເຖິງປັດຈຸບັນ.

I. ເນື້ອໃນແນວຄິດ ກ່ຽວກັບການປົກຄອງທ້ອງຖິ່ນ ໃນນິພົນ ໄກສອນ ພົມວິຫານ.

ໃນຂະບວນການຕໍ່ສູ້ກູ້ຊາດອັນລະອິດລະອ້ຽວຂອງບັນດາຜູ້ນຳ, ປະຊາຊົນລາວບັນດາເຜົ່າຜູ້ຮັກຊາດ ຕ້ານກັບຈັກກະພັດລ່າເມືອງຂຶ້ນ ທັງແບບເກົ່າ ແລະ ແບບໃໝ່ຫຼາຍທົດສະວັດຈົນກ້າວໄປເຖິງການໄດ້ ຮັບໄຊຊະນະຢ່າງສະຫງ່າງາມ ໂດຍພາຍໃຕ້ການນຳພາອັນສະຫຼາດສ່ອງ ໃສຂອງພັກປະຊາຊົນປະຕິວັດລາວ, ບັນດາທ່ານຜູ້ນຳລາວ ເວົ້າລວມ, ເວົ້າສະເພາະແມ່ນ ປະທານ ໄກສອນ ພົມວິຫານ ໄດ້ສຸມທຸກສະຕິ, ເຫື່ອແຮງ ແລະກຳລັງວັງຊາຢ່າງບໍ່ຮູ້ອິດເມື່ອຍເຂົ້າໃນພາລະກິດ

ປະຕິວັດ ຕັ້ງແຕ່ຕົ້ນຈົນເຖິງວິນາທີສຸດທ້າຍຂອງຊີວິດ ຊຶ່ງບັນດາ ແນວທາງນະໂຍບາຍ, ທິດສະດີ ແລະ ພຶດຕິກຳເຫຼົ່ານັ້ນ ໄດ້ສະແດງ ອອກໃນບົດລາຍງານການເມືອງຂອງປະທານ ໃນແຕ່ລະໄລຍະຂອງ ສະໄໝກອງປະຊຸມໃຫຍ່ ພັກປະຊາຊົນປະຕິວັດລາວ, ຍົກໃຫ້ເຫັນ ບາງຈຸດແນວຄິດຊີ້ນຳຂອງ ປະທານ ໄກສອນ ພົມວິຫານ ຕໍ່ວຽກງານ ການປົກຄອງທ້ອງຖິ່ນ ດັ່ງນີ້:

1). ແນວຄິດ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ: ປະທານ ໄກສອນ ພົມວິຫານ ໄດ້ໃຫ້ຄຳເຫັນວ່າ: “ຊຸດຄົ້ນຄວາມອາດສາມາດ ບໍ່ມຊ້ອນຂອງທ້ອງຖິ່ນ ແລະ ປະຕິບັດການສຳພັນທາງເສດຖະກິດ ກັບແຂວງເພື່ອນບ້ານໃກ້ຄຽງ, ເຮັດໃຫ້ແຕ່ລະແຂວງກາຍເປັນຫົວ ໜ່ວຍຍຸດທະສາດທາງດ້ານເສດຖະກິດ, ການປ້ອງກັນຊາດ, ດ້ານ ການເມືອງ ແລະ ວັດທະນະທຳ-ສັງຄົມ, ເຮັດໃຫ້ເມືອງກາຍເປັນຫົວ ໜ່ວຍເສດຖະກິດ ແລະແຜນການ” (ພົມວິຫານ, 2005, ໜ້າ 286).

ການຈັດຕັ້ງກົງຈັກຂອງລັດ ຕ້ອງສອດຄ່ອງກັບຈຸດໝາຍແຫ່ງ ການສ້າງສາ ແລະ ພັດທະນາລະບອບປະຊາທິປະໄຕປະຊາຊົນ, ຕ້ອງອີງໃສ່ຈຸດພິເສດຂອງປະເທດເຮົາ ພ້ອມນັ້ນກໍ່ຕ້ອງຄົ້ນຄວ້າ ບົດຮຽນຂອງປະເທດອື່ນ ເພື່ອສ້າງຕົວແບບລັດທີ່ເໝາະສົມຂຶ້ນມາ, ຕາມທິດນຳ ແລະ ຫຼັກການຈັດຕັ້ງກົງຈັກລັດ ຂອງປະເທດເຮົາໃນ ປັດຈຸບັນຄວນມີຄື: ສົມທົບການແບ່ງງານ ແລະ ການຄວບຕຳແໜ່ງ ຮັບຜິດ ຊອບວຽກງານ ພາຍໃຕ້ການນຳພາຂອງພັກ, ປະຕິບັດ ລະບອບຄວບຕຳແໜ່ງ (ທາງດ້ານການຈັດຕັ້ງ ແລະ ບຸກຄະລາ ກອນ) ລະຫວ່າງອົງການພັກ ແລະ ອົງການລັດ; ຮັບປະກັນການ ນຳພາຂອງພັກ ຕໍ່ກົງຈັກຂອງລັດ. ພ້ອມກັນນັ້ນ, ກໍ່ດຶງດູດໄດ້ຜູ້ທີ່ມີ ຄຸນສົມບັດ, ມີຄວາມສາມາດ ແລະ ມີບົດຮຽນເຂົ້າຮ່ວມໃນກົງຈັກ ລັດ.

ປະທານ ໄກສອນ ພົມວິຫານ ໄດ້ເນັ້ນບັນດາອົງການລັດຢູ່ ຂັ້ນສູນກາງ ອາດຈະຈັດຕັ້ງຄືດັ່ງລຸ່ມນີ້:

- ປະທານປະເທດ ແມ່ນປະມຸກລັດ, ມີສິດອຳນາດອຳນວຍ ຄວບຄຸມ ແລະ ປະສານສົມທົບການເຄື່ອນໄຫວຂອງບັນດາອົງການ ແຫ່ງລັດ, ແຕ່ງຕັ້ງ ແລະ ປົດອອກຈາກຕຳແໜ່ງບັນດາສະມາຊິກ ຂອງສະພາລັດຖະມົນຕີ, ເປັນປະທານສະພາປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ເປັນປະທານສານພິເສດ ຫຼື ປະທານສະພາ ໄອຍະການສານສູງສຸດ ເພື່ອຕັດສິນຄະດີຂອງພະນັກງານຊັ້ນສູງ...

- ສະພາປະຊາຊົນສູງສຸດ ແມ່ນອົງການນິຕິບັນຍັດ, ເປັນອົງ ການກວດກາການເຄື່ອນໄຫວ ຂອງອົງການບໍລິຫານ ແລະ ອົງການ ຕຸລາການ.

- ສະພາລັດຖະມົນຕີ (ຫຼື ລັດຖະບານຖ້າຈັດຕັ້ງຕາມລະບອບ ຫົວໜ້າ) ແມ່ນອົງການບໍລິຫານສູງສຸດຂອງລັດ ມີບັນດາກະຊວງ, ຄະນະກຳມະການຕ່າງໆ ທີ່ຂຶ້ນກັບສະພາລັດຖະມົນຕີ (ຫຼື ນາຍົກ) ທັງເຮັດວຽກຄຸ້ມຄອງຕາມຂະແໜງການ.

- ສານແມ່ນອົງການປົກປ້ອງລັດຖະທຳມະນູນ ແລະ ກົດໝາຍ ເຄື່ອນໄຫວເປັນເອກະລາດ ໃນການດຳເນີນຄະດີຕ່າງໆ. ພັກນຳພາສານ ແມ່ນນຳພາທາງດ້ານແນວທາງ, ທັດສະນະ, ການຈັດຕັ້ງ, ກໍ່ສ້າງພະນັກ ງານ. ພັກບໍ່ແຊກແຊງເຂົ້າໃນວຽກງານຕັດສິນຄະດີຂອງສານ.

ບັນດາອົງການຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ລ້ວນແຕ່ເຄື່ອນ ໄຫວຢູ່ພາຍໃຕ້ການນຳພາເປັນເອກະພາບ ຂອງຄະນະບໍລິຫານງານສູນ ກາງພັກ ໂດຍແມ່ນສະຫາຍເລຂາທິການໃຫຍ່ເປັນຜູ້ນຳສູງສຸດ.

ຢູ່ໃນຂັ້ນທ້ອງຖິ່ນ: ສະພາປະຊາຊົນທ້ອງຖິ່ນ ບໍ່ແມ່ນອົງການ ນິຕິບັນຍັດ ແຕ່ມີໜ້າທີ່ອະທິບາຍ ແລະ ເຜີຍແຜ່ກົດໝາຍ, ສະເໜີ ຄວາມຄິດຄວາມເຫັນເພີ່ມເຕີມ, ດັດແປງກົດໝາຍຕາມຄວາມມຸ່ງມາດ ປາຖະໜາອັນຊອບທຳຂອງປະຊາຊົນ. ສະພາປະຊາຊົນທ້ອງຖິ່ນ ແມ່ນ ອົງການຕາງໜ້າໃຫ້ແກ່ປະຊາຊົນ ໃນການຕິດຕາມ, ກວດກາ ການເຄື່ອນໄຫວ ຂອງອົງການບໍລິຫານ ແລະ ຕຸລາການຂອງທ້ອງຖິ່ນ, ມີສິດແຕ່ງຕັ້ງ ແລະ ປົດອອກຈາກຕຳແໜ່ງ ຫຼື ສະເໜີໃຫ້ຂັ້ນເທິງແຕ່ງ ຕັ້ງ ແລະ ປົດອອກຈາກຕຳແໜ່ງພະນັກງານຮັບຜິດຊອບຕົ້ນຕໍ ໃນບັນ ດາອົງການບໍລິຫານ ແລະ ຕຸລາການທ້ອງຖິ່ນ.

ກ່ຽວກັບສະພາປະຊາຊົນ ແລະ ອົງການບໍລິຫານຂັ້ນທ້ອງຖິ່ນ: ໄດ້ມີຫຼາຍຄວາມຄິດຄວາມເຫັນ ສະເໜີໃຫ້ລົບລ້າງສະພາປະຊາຊົນ ຂັ້ນແຂວງ ແລະ ເມືອງ. ພ້ອມດຽວກັນນັ້ນ, ກໍ່ສະເໜີໃຫ້ລົບລ້າງ ຄະນະກຳມະການປົກຄອງ ທີ່ສະພາປະຊາຊົນທ້ອງຖິ່ນເລືອກຕັ້ງຂຶ້ນຄື ໃນປັດ ຈຸບັນ ແລະ ປ່ຽນດ້ວຍລະບອບປະທານແຂວງ, ປະທານເມືອງ , ເທດ ຜົນທີ່ພາໃຫ້ມີຂໍ້ສະເໜີຄືແນວນັ້ນ ແມ່ນສະພາປະຊາຊົນ ທ້ອງຖິ່ນ ທີ່ປະຊາຊົນເລືອກຕັ້ງຂຶ້ນນັ້ນ ເປັນພຽງແຕ່ຮູບການຫຼາຍກວ່າ ເພາະບໍ່ໄດ້ເຄື່ອນໄຫວສົມກັບພາລະບົດບາດຂອງມັນ, ເຮັດໃຫ້ກົງຈັກ ຂອງອົງ ການປົກຄອງຢູ່ທ້ອງຖິ່ນໃຫຍ່ໂຕ, ເປັນການສິ້ນເປືອງ ງົບປະມານ ແລະ ເວລາໃນການປະຊຸມ (ເພາະຕ້ອງໄດ້ປະຊຸມຫຼາຍ ເທື່ອ), ເຮັດໃຫ້ວຽກງານຊ້ຳຊ້ອນ, ກ້າວກ່າຍກັນ ແລະ ຊັກຊ້າ.

ໃນບົດໂອ້ລົມຂອງ ປະທານ ໄກສອນ ພົມວິຫານ ຕໍ່ຊຸດບຳລຸງ ທິດສະດີຂອງສູນກາງ ປີ 1984-1985 ກ່ຽວກັບບັນຫາດັດແປງ ແລະ ສ້າງກົນໄກຄຸ້ມຄອງເສດຖະກິດໃນຍ່ານທາງທຳອິດຂອງສະໄໝຂ້າມ ຜ່ານກ້າວສູ່ສັງຄົມນິຍົມ ໃນປະເທດເຮົາ, ມີຕອນໜຶ່ງທ່ານໄດ້ກ່າວວ່າ:

ພວກເຮົາຄວນເຫັນວ່າເປີດກວ້າງປະຊາທິປະໄຕ, ມອບສິດ, ມອບ ຄວາມຮັບຜິດຊອບຕື່ມໃຫ້ທ້ອງຖິ່ນ ແລະ ຮາກຖານ ແມ່ນ ສອດຄ່ອງກັບກົດເກນ ເພາະວ່າບໍ່ມີໃຜດອກຈະເຂົ້າໃຈທ້ອງຖິ່ນ ແລະຮາກຖານເທົ່າກັບຄົນຂອງທ້ອງຖິ່ນ ແລະ ຮາກຖານນັ້ນເອງ. ການແບ່ງຂັ້ນຄຸ້ມຄອງນັ້ນ ຕ້ອງເຮັດໃຫ້ຄວາມຮັບຜິດຊອບ, ສິດອຳ ນາດຕິດພັນກັບຜົນປະໂຫຍດ, ວຽກໃດທີ່ທ້ອງຖິ່ນ ແລະ ຮາກຖານ ສາ ມາດເຮັດໄດ້ດ້ວຍປະສິດທິຜົນເສດຖະກິດ-ສັງຄົມສູງ ຄວນ ມອບໃຫ້ທ້ອງຖິ່ນ ແລະ ຮາກຖານເຮັດ, ເມື່ອໄດ້ມອບຄວາມ ຮັບຜິດຊອບແລ້ວຕ້ອງມອບສິດອຳນາດ ແລະ ຜົນປະໂຫຍດທີ່ຄູ່ ຄວນ: “ເຮັດດີໄດ້ກິນຫຼາຍ, ເຮັດບໍ່ດີປານໃດໄດ້ກິນໜ້ອຍ, ເຮັດຜິດ ຖືກວິໄນ, ເຮັດເປ່ເພຕ້ອງໃຊ້ແທນ” (ພົມວິຫານ, 2005, ໜ້າ 303). ໃນເງື່ອນ ໄຂຂອງພວກເຮົາ, ການເພີ່ມທະວີການນຳພາຂອງ ທ້ອງຖິ່ນຕ່າງໆ ແມ່ນມີຄວາມໝາຍສຳຄັນທີ່ສຸດ ເພາະວ່າທຸກ ການເຄື່ອນໄຫວເສດ ຖະກິດ-ສັງຄົມ ແມ່ນໄດ້ດຳເນີນຢູ່ໃນທ້ອງຖິ່ນ ຕ່າງໆ ເປັນຈຸດໝັກ, ຍ້ອນແນວນັ້ນ ຕ້ອງປະຕິບັດການແບ່ງຂັ້ນຄຸ້ມ ຄອງ ແລະ ປັບປຸງບູລະນະກົງຈັກຄຸ້ມຄອງຢູ່ທ້ອງຖິ່ນ ໃຫ້ສຳເລັດ ເປັນຢ່າງດີ. “ທ້ອງຖິ່ນຕ່າງໆ ຕ້ອງໄດ້ເອົາໃຈໃສ່ດັດແປງການນຳພາ ຂອງຕົນ ຕ້ອງລະມັດ ລະວັງທີ່ສຸດ ເພື່ອບໍ່ໃຫ້ມີການແຊກແຊງແບບ ບັງອາດ ທີ່ເຮັດໃຫ້ ການຂະຫຍາຍຕົວ ທີ່ພວມສະດວກກັບການ ເປັນອຶດອາດຫຍຸ້ງຍາກກວ່າເກົ່າ” (ພົມວິຫານ, 2005, ໜ້າ 369). ນອກຈາກນັ້ນ, ປະທານ ໄກສອນ ພົມວິຫານ ກໍ່ຍັງໄດ້ໃຫ້ທິດຊີ້ນຳ ວ່າ: ການແບ່ງຂັ້ນຄຸ້ມຄອງຕ້ອງຮັບປະກັນ 4 ຄາດໝາຍຄື:

+ ໃນເວລາແບ່ງ ແລະ ມອບຄວາມຮັບຜິດຊອບນັ້ນ, ຕ້ອງ ແບ່ງ ແລະ ມອບສິດ, ພາຫະນະ, ວັດຖຸ ແລະ ກຳນົດຜົນປະໂຫຍດ ໃຫ້ແກ່ທ້ອງຖິ່ນໄປພ້ອມກັນ, ສ້າງທຸກເງື່ອນໄຂໃຫ້ແກ່ຂັ້ນທີ່ໄດ້ຮັບ ການມອບໝາຍ ແລະ ແບ່ງຂັ້ນໃຫ້ດຳເນີນວຽກງານຄຸ້ມຄອງຂອງຕົນ ເປັນຢ່າງດີ. ພວກເຮົາມອບໃຫ້ແຕ່ທ້ອງຖິ່ນເຮັດວຽກນີ້, ວຽກນັ້ນ ໂດຍທີ່ເຂົາເຈົ້າບໍ່ມີສິດ ແລະ ພາຫະນະອັນໃດ (ທຶນຮອນ, ວັດຖຸປະ ກອນ ແລະ ພາຫະນະ) ແມ່ນເປັນໄປບໍ່ໄດ້, ຖ້າຫາກເຮັດໄປແນວ ນັ້ນ ກໍ່ຈະບໍ່ໄດ້ຮັບຜົນປະໂຫຍດຫຍັງດອກ. ເຮັດຄືແນວນີ້, ໃນຕົວ ຈິງແມ່ນບໍ່ສ້າງເງື່ອນໄຂໃຫ້ທ້ອງຖິ່ນ, ການແບ່ງຂັ້ນ ແລະ ການມອບ ຄວາມຮັບຜິດຊອບນັ້ນ ມັນມີແຕ່ລັກສະນະຮູບການເທົ່ານັ້ນ, ເພາະ ມັນຂາດບັນດາປັດໄຈອັນຈຳເປັນ, ນັບທັງການສົ່ງເສີມຜົນປະໂຫຍດ ທາງດ້ານວັດຖຸ ຊຶ່ງເປັນແມ່ແຮງອັນໜຶ່ງທີ່ສຳຄັນຍິ່ງ ໃນການແບ່ງຂັ້ນ ຄຸ້ມຄອງ ແລະ ການຂະຫຍາຍເສດຖະກິດ.

+ ຢາກແບ່ງຂັ້ນໄດ້ ຕ້ອງມີກົງຈັກ ແລະ ພະນັກງານ, ຕ້ອງມີ ຄົນທີ່ມີຄວາມສາມາດເຮັດ, ຮູ້ຈັກຄຸ້ມຄອງ, ຮູ້ຄົ້ນຄວ້າ ແລະ ຮັບເອົາ ແນວທາງ, ແຜນນະໂຍບາຍ, ຮູ້ຈັກສຳຫຼວດຄົ້ນຄວ້າ ແລະ ໝູນໃຊ້ ແນວທາງນະໂຍບາຍເຂົ້າໃນສະພາບຕົວຈິງ ຂອງທ້ອງຖິ່ນຢ່າງລະອຽດ, ບໍ່ແມ່ນວ່າຈະປະໃຫ້ແຜນຮ່າງທີ່ວາງອອກນັ້ນ ກາຍເປັນແຜນຮ່າງຂອງ ທ້ອງຖິ່ນ ໂດຍກ່າຍເອົາຂອງສູນກາງໝົດ. ຖ້າຫາກບໍ່ທັນມີຄົນເຮັດກໍ່ບໍ່ ແບ່ງຂັ້ນໃຫ້ເຂົາເຈົ້າເຮັດ, ບ່ອນໃດ ຂັ້ນໃດເກັ່ງ ກໍ່ແບ່ງໃຫ້ຫຼາຍ, ບ່ອນ ໃດ, ຂັ້ນໃດ ຫາກບໍ່ທັນມີເງື່ອນໄຂເຮັດໄດ້ຫຼາຍ ກໍ່ແບ່ງໃນລະດັບພໍ ດ້ານພໍດີ ຫຼື ມີບາງດ້ານກໍ່ບໍ່ຄວນແບ່ງໃຫ້ເທື່ອ.

+ ການແບ່ງງານ, ແບ່ງຂັ້ນນັ້ນ ບໍ່ແມ່ນການແບ່ງສິດ, ແບ່ງເຂດ ແຄວ້ນ, ແບ່ງຊັບສົມບັດຂອງຊາດ, ສູນກາງ ມອບໃຫ້ທ້ອງຖິ່ນແລ້ວ ປະປ່ອຍໃຫ້ທ້ອງຖິ່ນ ຢາກເຮັດແນວໃດກໍ່ເຮັດ, ສູນກາງເມີນເສີຍຢູ່, ແຕ່ແມ່ນການຄຸ້ມຄອງຕາມຫຼັກການລວມສູນປະຊາທິປະໄຕ. ພາຍຫຼັງ ການແບ່ງຂັ້ນແລ້ວ, ມັນຮຽກຮ້ອງໃຫ້ບັນດາຂະແໜງການສູນກາງຕ້ອງ ມີຄວາມຮັບຜິດຊອບສູງກວ່າເກົ່າ, ມີວິທີການຊ່ວຍບັນດາທ້ອງ ຖິ່ນ ຫຼາຍກວ່າເກົ່າ, ກຳນົດບັນຫາຕ່າງໆທີ່ທ້ອງຖິ່ນຕ້ອງການໃຫ້ແໜ້ນກວ່າ ເກົ່າ ເພື່ອມີວິທີການແກ້ໄຂ. ທ້ອງຖິ່ນຢາກເຮັດໜ້າທີ່ຂອງຕົນໄດ້ດີນັ້ນ ຕ້ອງອີງໃສ່ຂັ້ນເທິງ (ແຂວງອີງໃສ່ສູນກາງ, ເມືອງອີງໃສ່ແຂວງ) ເປີດ ກວ້າງການຮ່ວມມືສຳພັນກັບບັນດາການຈັດຕັ້ງ ຂອງສູນກາງ, ພ້ອມ ກັນນັ້ນ ກໍ່ຍາດແຍ່ງເອົາການຮ່ວມມືຈາກພາຍນອກ ເປັນຕົ້ນແມ່ນ ບັນດາແຂວງແຮກສ່ຽວ ເພື່ອເສີມຂະຫຍາຍທ່າແຮງຂອງຕົນ ຈຶ່ງ ສາມາດຂະຫຍາຍເສດຖະກິດ, ປ່ຽນແປງຊີວິດການເປັນຢູ່ໄດ້.

+ ກ້າແບ່ງ ແລະ ມອບຄວາມຮັບຜິດຊອບ, ມອບສິດໃຫ້ແກ່ ທ້ອງຖິ່ນ, ເປີດກວ້າງປະຊາທິປະໄຕໃຫ້ແກ່ເສດຖະກິດທ້ອງຖິ່ນ, ເສີມຂະຫຍາຍສະຕິເປັນເຈົ້າໃນການຄຸ້ມຄອງເສດຖະກິດຢູ່ທ້ອງຖິ່ນ ແລະ ຮາກຖານຢ່າງແທ້ຈິງ, ແຕ່ກໍ່ບໍ່ຄວນປະໃຫ້ທ້ອງຖິ່ນ ແລະ ຮາກ ຖານ ເຮັດຕາມໃຈ, ສູນກາງຕ້ອງຜ່ານຈຸດສູງແຫ່ງການບັນຊາ, ລະບອບ, ລະບຽບການ, ນະໂຍບາຍ ແລະ ລະບົບການກວດກາ ກວດການ ຈຶ່ງຈະຮູ້ຈັກທຸກວຽກງານຂອງທ້ອງຖິ່ນ ຈຶ່ງກຳໄດ້ບັນດາ ບົດຮຽນອັນດີຢູ່ໃນແຕ່ລະທ້ອງຖິ່ນ, ແຕ່ລະຮາກຖານ ເພື່ອສະຫຼຸບ ສັງລວມຄົ້ນ ແລະ ເຜີຍແຜ່ໄປທົ່ວປະເທດ. ພ້ອມກັນນັ້ນ, ກໍ່ຕ້ອງຮູ້ ອັນຜິດ ແລະ ຈຸດອ່ອນ, ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດຢູ່ ບ່ອນນັ້ນ. ການແບ່ງຂັ້ນ ບໍ່ແມ່ນການລະເຫຼີງການນຳພາ, ລະເຫຼີງການ ຄຸ້ມຄອງ ແຕ່ແມ່ນ “ຕ້ອງເພີ່ມທະວີການນຳພາ ແລະ ເດີນເຂົ້າສູ່ການ ຄຸ້ມຄອງໃຫ້ແໜ້ນກວ່າເກົ່າ, ແຕ່ຊ້ຳພັດຫຼີກເວັ້ນພະຍາດອາດຍາສິດ, ອຸ້ມວຽກອຸ້ມງານ, ອັນຈະພາໃຫ້ປະສິດທິຜົນຂອງວຽກງານຕົກ ຕ່ຳ, ສູນກາງ ຈະຄຸ້ມຄອງແຕ່ອັນໃດທີ່ນອນຢູ່ໃນຂອບເຂດ ຂອງຄວາມຈຳ

ເປັນພາອະວິໄສ ແລະ ພໍດີກັບຄວາມຮູ້ຄວາມເຂົ້າໃຈອັດຕະວິໄສ ຂອງບັນດາອົງການນຳສູນກາງເທົ່ານັ້ນ" (ພົມວິຫານ, 1984, ໜ້າ 12).

2). ແນວຄິດ ກ່ຽວກັບການຫັນການປົກຄອງທ້ອງຖິ່ນ ເຂົ້າສູ່ລະບຽບກົດໝາຍ: ຕາມທັດສະນະແນວຄິດຂອງປະທານ ໄກສອນ ພົມວິຫານ ການສ້າງລັດໃຫ້ເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນ, ແມ່ນລັດທີ່ມີທາດແທ້ຊົນຊັ້ນກຳມະກອນ ໂດຍສະ ເພາະຢູ່ຂັ້ນທ້ອງຖິ່ນ. ປະທານໄກສອນ ພົມວິຫານ ຢັ້ງຢືນ ວ່າ: "ຊົນຊັ້ນກຳມະກອນ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງໃນທຸກດ້ານ ໃນພາກຕົວຈິງແຫ່ງການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມນັ້ນເອງ ເຊັ່ນ: ຫຼັກໝັ້ນ, ທັດສະນະ, ລະດັບວັດທະນາທຳ, ວິຊາສະເພາະ, ລະບຽບອອກ ແຮງງານ... ທັງນີ້ ກໍ່ເພື່ອໃຫ້ສົມຄູ່ກັບເປັນຊົນຊັ້ນ ປະຕິວັດກ່ວາໝູ່, ເປັນກຳລັງຫຼັກແຫຼ່ງທີ່ດຳລົງບົດບາດນຳພາສັງຄົມ" (ພົມວິຫານ, 2005, ໜ້າ 461).

ປີ 1987 ພາຍຫຼັງທີ່ມີການປ່ຽນແປງ, ປະທານ ໄກສອນ ພົມວິຫານ ຢັ້ງຢືນການກໍ່ສ້າງລະບົບກົດໝາຍສັງຄົມນິຍົມ ວ່າ: "ກົດໝາຍເປັນເຄື່ອງມືສຳລັບໃຫ້ລັດຄຸ້ມຄອງສັງຄົມ, ເປັນເງື່ອນໄຂອັນ ຈຳ ເປັນ ເພື່ອເຮັດໃຫ້ປະຊາທິປະໄຕສັງຄົມນິຍົມປາກົດຜົນເປັນຈິງ; ຄຽງຄູ່ກັບການສ້າງລະບົບກົດໝາຍຂອງລັດ ຕ້ອງເພີ່ມທະວີການ ໂຄສະນາ ແລະ ສຶກສາອົບຮົມ ກ່ຽວກັບສະຕິຕໍ່ລະບຽບ, ກົດໝາຍ ເຮັດໃຫ້ປະຊາຊົນ ແລະ ລັດຖະກອນ ມີສະຕິຕໍ່ລະບຽບ, ກົດໝາຍ ສັງຄົມນິຍົມເທື່ອລະກ້າວ ເພື່ອໃຫ້ເຂົາດຳລົງຊີວິດ ແລະ ເຮັດວຽກ ຕາມກົດໝາຍຂອງລັດດ້ວຍຄວາມຕື່ນຕົວ" (ພົມວິຫານ, 2005, ໜ້າ 506). ປະທານ ໄກສອນ ພົມວິຫານ ຢັ້ງຢືນວ່າ: "ລັດຂອງພວກເຮົາເປັນຕົວແທນແຫ່ງອຳນາດຂອງປະຊາຊົນ, ເປັນຜູ້ຈັດຕັ້ງ ແລະ ຊີ້ນຳການປະຕິ ບັດບັນດາແນວທາງ, ແຜນນະໂຍບາຍ ແລະ ນະໂຍບາບຂອງພັກ, ເປັນຜູ້ຄຸ້ມຄອງ, ອຳນວຍ, ຄວບຄຸມທຸກ ການເຄື່ອນໄຫວຂອງສັງຄົມ ຕາມກົດໝາຍ" (ພົມວິຫານ, 1997, ໜ້າ 447).

ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: ກ່ອນອື່ນໝົດ ຕ້ອງຮັບຮູ້ແຈ້ງ ກ່ຽວກັບພາລະບົດບາດທີ່ເພີ່ມຂຶ້ນ ຂອງລັດ ປະຊາທິປະໄຕປະຊາຊົນ ຊຶ່ງມັນສະແດງອອກເຖິງລັກສະນະຂອງ ລັດເຮົາ: "ລັດເຮົາແມ່ນລັດປະຊາທິປະໄຕປະຊາຊົນ ທີ່ມີລັກສະນະ ຊົນຊັ້ນ, ລັກສະນະຊາດ, ລັກສະນະປະຊາທິປະໄຕ ແລະ ລັກສະນະປະຊາຊົນ. ການກຳນົດລັກສະນະຂອງລັດເຮົາຄືແນວນັ້ນ ແມ່ນສອດຄ່ອງກັບລະດັບຂະຫຍາຍ ຕົວທາງດ້ານເສດຖະກິດ-ສັງຄົມ, ກັບລະດັບຄວາມຮູ້ຂອງປະຊາຊົນ ແລະ ຈຸດພິເສດຂອງ ປະເທດເຮົາ. ມັນສະແດງເຖິງແນວທາງອັນສະເໝີຕົ້ນສະເໝີປາຍຂອງ ພັກເຮົາ ທີ່ຍາມໃດກໍ່ເອົາໃຈໃສ່ຈິດຈໍ່ຕໍ່ການເພີ່ມທະວີຄວາມສາມັກຄີ ເປັນອັນໜຶ່ງອັນດຽວ ຂອງປວງຊົນທັງຊາດ, ສົມ ທົບຈິດໃຈຮັກຊາດ ອັນດູດດື່ມ ກັບນ້ຳໃຈສາກົນອັນຜ່ອງໃສ, ສົມທົບກຳລັງແຮງຂອງຊາດ ກັບກຳລັງຂອງຍຸກສະໄໝ ຊຶ່ງມັນສະແດງອອກດັ່ງນີ້:

+ ລັກສະນະຊົນຊັ້ນຂອງລັດເຮົາ ສະແດງອອກຢ່າງລວມສູນຢູ່ ບ່ອນວ່າ ພັກປະຊາຊົນປະຕິວັດລາວ ເປັນຜູ້ນຳພາທຸກການເຄື່ອນໄຫວ ຂອງລັດ ແມ່ນແນໃສ່ປະຕິບັດແນວທາງ, ແຜນນະໂຍບາຍ ແລະ ນະ ໂຍ ບາຍຕ່າງໆຂອງພັກ ໃຫ້ປາກົດຜົນເປັນຈິງ.

+ ລັກສະນະຊາດຂອງລັດເຮົາ ສະແດງອອກຢູ່ບ່ອນວ່າ ແມ່ນ ລັດເອກະພາບ ຂອງປະຊາຊົນບັນດາເຜົ່າ ໃນວົງຄະນະຍາດແຫ່ງຊາດ ລາວ, ປະຕິບັດຄວາມສະເໝີພາບ ລະຫວ່າງເຜົ່າຕ່າງໆຢ່າງເຖິງຖອງ, ນຳເອົາຄວາມຢູ່ດີກິນດີມາສູ່ປະຊາຊົນ ແລະ ຄວາມຈະເລີນກ້າວໜ້າ ມາສູ່ປະເທດຊາດ.

+ ລັກສະນະປະຊາທິປະໄຕ ຂອງລັດເຮົາ ແມ່ນປະຊາທິປະໄຕ ຂອງຄົນສ່ວນໃຫຍ່, ແມ່ນປະຊາທິປະໄຕທີ່ມີການຈັດຕັ້ງ, ມີການ ນຳພາ ແລະຢູ່ໃນຂອບເຂດຂອງກົດໝາຍ, ທີ່ທັງເປັນຈຸດໝາຍ, ທັງ ເປັນກຳລັງດັນ ຂອງລະບອບໃໝ່, ຫາກບໍ່ແມ່ນປະຊາທິປະໄຕຕາມ ໃຈຊອບແບບເສລີອະນາທິປະໄຕ. ລັດຄ້ຳປະກັນສິດເສລີພາບ, ປະຊາ ທິປະໄຕ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ, ພ້ອມ ກັນນັ້ນ ພົນລະເມືອງກໍ່ຕ້ອງປະຕິບັດພັນທະຂອງຕົນຢ່າງຄົບຖ້ວນ.

+ ລັກສະນະປະຊາຊົນຂອງລັດເຮົາ ສະແດງອອກຢູ່ບ່ອນວ່າ ອຳນາດທັງໝົດຂອງລັດ ແມ່ນອຳນາດຂອງປະຊາຊົນ ແລະ ເພື່ອ ປະຊາຊົນ. ປະຊາຊົນໄດ້ຮັບການສຶກສາອົບຮົມ, ຍົກລະດັບຄວາມຮູ້ ເປັນກ້າວໆ ເພື່ອເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດໃນທຸກ ດ້ານ, ເຂົ້າຮ່ວມການຄຸ້ມຄອງລັດດ້ວຍຄວາມເປັນເຈົ້າການ" (ພົມວິ ຫານ, 1987, ໜ້າ 447-448).

ປະທານ ໄກສອນ ພົມວິຫານ ສັງລວມວ່າ ລັດປະຊາຊາທິປະ ໄຕປະຊາຊົນ ຂອງພວກເຮົາ ມີໜ້າທີ່ຕົ້ນຕໍດັ່ງນີ້:

ໜຶ່ງ, "ຄົ້ນຄວ້າເຊື່ອມຊຶມ ແລະ ຫັນມະຕິຕ່າງໆຂອງພັກເປັນ ແຜນກຳນົດ, ແຜນການ, ໂຄງການດຳເນີນງານລະອຽດ, ເປັນນະໂຍ ບາຍ, ມາດຕະການ, ເປັນຂໍ້ກຳນົດ, ລະບຽບການ ແລະ ກົດໝາຍຂອງ ລັດ ທັງຂົງເຂດພາຍໃນ ແລະ ການຕ່າງປະເທດ.

ສອງ, ຈັດຕັ້ງໂຄງປະກອບອຳນາດແຫ່ງລັດ, ລະດົມທຸກກຳລັງ ແລະ ພາຫະນະ ເພື່ອຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງ

ພັກ, ພ້ອມກັນນັ້ນ ກໍຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດສິ່ງທີ່ໄດ້ຫັນເປັນອັນລະອຽດນັ້ນເປັນຢ່າງດີ.

ສາມ, ເສີມຂະຫຍາຍປະຊາທິປະໄຕໃນໝູ່ປະຊາຊົນ, ທາບທາມຄວາມຄິດຄວາມເຫັນຂອງປະຊາຊົນ ກ່ຽວກັບແຜນນະໂຍບາຍ , ນະໂຍບາຍ ແລະ ກົດໝາຍຕ່າງໆ ກ່ຽວກັບການປະຕິບັດໜ້າທີ່ຮັບໃຊ້ປະຊາຊົນ ຂອງບັນດາອົງການ, ພະນັກງານ ແລະ ພະລາກອນ ຂອງລັດ. ເຮັດຄືແນວນັ້ນ ກໍເພື່ອປະຕິບັດສິດເປັນເຈົ້າ ແລະ ສິດ ກວດກາຂອງປະຊາຊົນ ຕໍ່ບັນດາອົງການລັດນັ້ນເອງ.

ສີ່, ເສີມສ້າງຄວາມສາມັກຄີປອງດອງ, ຄວາມເປັນເອກະພາບ ຂອງວົງຄະນະຍາດແຫ່ງຊາດ, ຮັບປະກັນຄວາມເປັນເອກະລາດ, ອະທິປະໄຕຂອງຊາດ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ, ປະຕິບັດແນວທາງ ແລະ ນະໂຍບາຍການ ຕ່າງປະ ເທດຂອງພັກຢ່າງຖືກຕ້ອງ.

ຫ້າ, ປັບປຸງບູລະນະກົງຈັກການຈັດຕັ້ງຂອງລັດ ໃຫ້ມີປະ ສິດທິ ພາບ, ກໍ່ສ້າງ, ຝຶກອົບຮົມ, ຍົກລະດັບ ແລະ ສຶກສາອົບຮົມ ພະນັກງານຢ່າງເປັນປະຈຳ ເພື່ອມີຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດສິນທຳ, ປະຕິບັດໜ້າທີ່ດ້ວຍຄວາມຊື່ສັດບໍລິສຸດ ແລະ ມີປະສິດທິພາບ" (ພົມວິຫານ, 1987, ໜ້າ 451-452).

3). ແນວຄິດກ່ຽວກັບການປ່ຽນແປງໃໝ່ການປົກຄອງ ທ້ອງຖິ່ນຢູ່ ສປປ ລາວ: ໃນເມື່ອມີການແບ່ງງານ, ແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ດ້ວຍການເພີ່ມສິດ ແລະ ຄວາມ ຮັບຜິດຊອບໃຫ້ກັບທ້ອງຖິ່ນຫຼາຍຂຶ້ນ, ການເຊື່ອມໂຍງພາກພື້ນ ແລະ ສາກົນນັບມື້ນັບກວ້າງຂວາງ ບວກກັບລະດັບການຕື່ນຕົວດ້ານ ການເມືອງ ຂອງປະຊາ ຊົນ ນັບມື້ນັບສູງຂຶ້ນ ຈຶ່ງຮຽກຮ້ອງໃຫ້ຕ້ອງມີ ອົງການຕົວແທນ ຂອງປະຊາຊົນ ທີ່ເຮັດໜ້າທີ່ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຂອງອົງການບໍລິຫານລັດທ້ອງຖິ່ນ, ທັງຕິດຕາມກວດກາການ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ປະຕິບັດລະບຽບກົດໝາຍໃນທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ມີຜົນສັກສິດຫຼາຍຂຶ້ນ.

ໃນການປ່ຽນແປງໃໝ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງລັດຖະບານ ເພື່ອຮັບປະກັນໃຫ້ລັດຖະບານ ເປັນອົງການ ບໍລິຫານລັດສູງສຸດ, ເສີມຂະຫຍາຍບົດບາດຂອງລັດຖະບານ ຂຶ້ນ ແຜນກຳນົດ ແລະບໍລິຫານນະໂຍບາຍແຫ່ງຊາດ; ສ້າງພື້ນຖານການ ບໍລິຫານທີ່ເປັນເອກະພາບ, ບຸກທະລຸຢ່າງໂປ່ງໃສ, ເຂັ້ມແຂງ, ໜັກແ ໜ້ນ, ຈັດຕັ້ງກົງຈັກລັດໃຫ້ກະທັດຮັດ ເໝາະສົມ, ເປັນມືອາຊີບ, ທັນສະໄໝ; ກຳນົດແຈ້ງສິດໜ້າທີ່ ກົງຈັກການຈັດຕັ້ງຂອງ ລັດຖະບານບໍ່ຊ້ຳຊ້ອນ; ຮັບປະກັນຫຼັກ ການອຽກໜຶ່ງ ມອບໃຫ້ ອົງການເປັນເຈົ້າການໃນການປະຕິບັດ ແລະ ຮັບຜິດຊອບເປັນຫຼັກ; ປະຕິບັດການແບ່ງຂັ້ນໃຫ້ອຳນາດການປົກຄອງຢ່າງເໝາະສົມ, ພ້ອມ ທັງຍົກສູງຄຸນນະພາບການຂຶ້ນແຜນກຳນົດ ແລະເພີ່ມທະວີການກວດ ສອບ, ຕິດຕາມກວດກາ ຂອງທ້ອງຖິ່ນ; ຍູ້ແຮງການປະຕິຮູບການ ບໍລິຫານ, ລົບລ້າງການປະກອບເອກະສານທີ່ສ້າງຄວາມຫຍຸ້ງຍາກ, ລາ ຄານໃຫ້ແກ່ອົງການຈັດຕັ້ງ ແລະ ພົນລະເມືອງ. ຍົກສູງຄຸນນະພາບ ການເຄື່ອນໄຫວ ຂອງອຳນາດການປົກຄອງທ້ອງ ຖິ່ນ, ຮັບປະກັນໃຫ້ ອຳນາດການປົກຄອງທ້ອງຖິ່ນ ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ, ບັນດານິຕິກຳຂອງອົງການລັດຂັ້ນເທິງຢ່າງເຂັ້ມງວດ ພ້ອມ ທັງເສີມຂະຫຍາຍຫົວຄິດປະດິດສ້າງ, ຄວາມອາດສາມາດ, ກຳລັງແຮງ , ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງອົງການປົກຄອງ.

II. ການໝູນໃຊ້ແນວຄິດ ກ່ຽວກັບການປົກຄອງທ້ອງຖິ່ນ ໃນ ນິພົນ ໄກສອນ ພົມວິຫານ.

- ການໝູນໃຊ້ແນວຄິດປະທານ ໄກສອນ ພົມວິຫານ ເຂົ້າໃນ ການແບ່ງຂັ້ນຄຸ້ມຄອງ: ໃນບົດຄຳເຫັນຕອນໜຶ່ງ ຂອງປະທານ ໄກສອນ ພົມວິຫານ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ, ປະທານໄດ້ກ່າວ ວ່າ: "ການແບ່ງງານ, ແບ່ງຂັ້ນນັ້ນ ມັນບໍ່ແມ່ນການແບ່ງສິດ, ແບ່ງເຂດ ແຄວ້ນ, ແບ່ງຊັບສົມບັດຂອງຊາດ" (ພົມວິຫານ, 1984, ໜ້າ 1).

ໃນໄລຍະຜ່ານມາ ພວກເຮົາໄດ້ດຳເນີນການແບ່ງຂັ້ນຄຸ້ມຄອງ ຕາມຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ສະບັບເລກທີ 01/ນຍ, ລົງວັນທີ 11 ມີນາ 2000 ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດ ທະສາດ, ເມືອງເປັນຫົວໜ່ວຍແຜນການງົບປະມານ ແລະ ສ້າງບ້ານ ເປັນຫົວໜ່ວຍພື້ນຖານຈັດຕັ້ງປະຕິບັດ, ຄຳສັ່ງແນະນຳສະບັບນີ້ໄດ້ຍົກ ໃຫ້ເຫັນວ່າ: ການແບ່ງຂັ້ນຄຸ້ມຄອງ ແລະ ມອບຄວາມຮັບຜິດ ຊອບ ໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ ລະຫວ່າງສູນກາງ, ແຂວງ, ເມືອງ, ບ້ານ ແລະ ຫົວໜ່ວຍຄອບຄົວ ຍັງ ບໍ່ທັນຈະແຈ້ງ ແລະ ຂາດຕົວ. ໝາຍຄວາມວ່າ ກົນໄກຄຸ້ມຄອງລັດ ຕາມຂະແໜງການທີ່ໄດ້ສ້າງຕັ້ງຂຶ້ນ ປີ 1991 ຍັງບໍ່ທັນໄດ້ເຄື່ອນໄຫວດີ ສົມຄວນ ໂດຍສະເພາະແມ່ນໃນດ້ານພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານ. ຈຸດປະສົງຕົ້ນຕໍຂອງຄຳສັ່ງດັ່ງກ່າວນີ້ແມ່ນ "ເພື່ອ ຂະຫຍາຍສິດ ແລະ ເພີ່ມທະວີຄວາມຮັບຜິດຊອບຂອງທ້ອງຖິ່ນ ແລະ ຮາກຖານ ໃນການຊຸດຄົ້ນນຳໃຊ້ທ່າແຮງ ແລະ ຄວາມອາດສາມາດບົ່ມ ຊ້ອນຂອງຕົນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມບົນຈິດໃຈ ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ຫຼຸດຜ່ອນການເອື່ອຍອີງຂອງທ້ອງຖິ່ນໃສ່ສູນກາງ" (ພົມວິຫານ,

1984, ໜ້າ 11-12). ນະໂຍບາຍດັ່ງກ່າວ ໄດ້ປະກອບ ສ່ວນອັນສຳຄັນ ເຂົ້າໃນການປັບປຸງກົນໄກການພົວພັນປະສານງານ ລະຫວ່າງສູນກາງ ແລະ ທ້ອງຖິ່ນຄືນໃໝ່, ແກ້ໄຂການອຸ້ມວຽກ, ການເຮັດວຽກແທນທ້ອງຖິ່ນຂອງສູນກາງ ແລະ ການຍົກສູງຄວາມຮັບຜິດຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ລະດັບໜຶ່ງ, ໄດ້ຊ່ວຍສ້າງຄວາມເຂັ້ມແຂງໃຫ້ລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ໂດຍເລີ່ມແຕ່ຮາກຖານທ້ອງຖິ່ນຂຶ້ນມາຢ່າງເປັນຈິງ.

- ການໝູນໃຊ້ແນວຄິດ ປະທານ ໄກສອນ ພົມວິຫານ ເຂົ້າໃນການຫັນການປົກຄອງທ້ອງຖິ່ນ ເຂົ້າສູ່ລະບຽບກົດໝາຍ: ໃນລະບົບການປົກຄອງຂອງລາວ ໄດ້ມີກົດໝາຍ, ລະບຽບ, ຮີດຄອງປະເພນີ ໃນການປົກຄອງຢ່າງຮອບດ້ານ; ເຖິງແມ່ນວ່າໄລຍະທີ່ປະເທດເຮົາ ບໍ່ທັນມີລັດຖະທຳມະນູນ ແຕ່ລັດກໍ່ໄດ້ມີລະບຽບ, ມີກົດໝາຍ, ມີກົດປະເພນີ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມໃຫ້ມີຄວາມເປັນລະບົບຮຽບຮ້ອຍ ແລະ ການຄຸ້ມຄອງລັດໃນໄລຍະນັ້ນກໍ່ມີຄວາມສັກສິດ ແລະ ມີປະສິດທິຜົນດີ. ແຕ່ເຖິງແນວໃດກໍ່ຕາມ ໃນເມື່ອສະພາບແວດລ້ອມມີການປ່ຽນແປງ, ສະພາບການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ, ລະດັບຄວາມຮູ້ຂອງຄົນເຮົາ ກໍ່ໄດ້ຮັບການຍົກລະດັບຂຶ້ນ, ການຄຸ້ມຄອງລັດຄຸ້ມຄອງສັງຄົມກໍ່ຕ້ອງໄດ້ຫັນໄປສູ່ລະບຽບກົດໝາຍ. ດ້ວຍເຫດນັ້ນ, ວິວັດທະນາການການປົກຄອງທ້ອງຖິ່ນ ໄປສູ່ລະບຽບກົດໝາຍ ໄດ້ມີບາດກ້າວຂະຫຍາຍຕົວດັ່ງນີ້:

1). ໄລຍະກ່ອນມີລັດຖະທຳມະນູນ: ແຕ່ 1975 ເຖິງ 1990 ແມ່ນໄລຍະການຄຸ້ມຄອງລັດດ້ວຍແນວທາງ-ນະໂຍບາຍ, ມະຕິຄຳສັ່ງ ຂອງຝ່າຍປົກຄອງ ເພາະລັດຖະທຳມະນູນ ຍັງບໍ່ທັນຖືກປະກາດໃຊ້. ສ່ວນຢູ່ຂັ້ນທ້ອງຖິ່ນ ໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການດັ່ງລຸ່ມນີ້:

- ຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 53/ນຍ, ລົງວັນທີ 15 ຕຸລາ 1976 ກ່ຽວກັບການຈັບຕົວ, ການສືບສວນ ແລະ ການຕັດສິນຜູ້ກະທຳຜິດ ເປັນຕົ້ນແມ່ນພວກປະຕິການ, ພວກກໍ່ການກະບົດ ແລະ ການທໍລະຍົດຕໍ່ຊາດ.

- ກົດໝາຍເລກທີ 101/ສປສ, ລົງວັນທີ 31/07/1978, ວ່າດ້ວຍການຈັດຕັ້ງສະພາປະຊາຊົນ ແລະ ຄະນະກຳມະການປົກຄອງ ປະຊາ ຊົນຂັ້ນຕ່າງໆ.

- ມະຕິຕົກລົງຂອງສະພາລັດຖະມົນຕີ, ລົງວັນທີ 31/07/1978, ວ່າດ້ວຍໜ້າທີ່, ສິດ ແລະ ຄວາມຮັບຜິດຊອບ ຂອງອຳນາດການປົກຄອງຂັ້ນແຂວງ ໃນຂົງເຂດຄຸ້ມຄອງເສດຖະກິດ.

ໃນຊ່ວງກ່ອນ ມີນະໂຍບາຍການປ່ຽນແປງໃໝ່ ການປົກຄອງທ້ອງຖິ່ນຢູ່ ສປປ ລາວ ໄດ້ປະຕິບັດຕາມກົດໝາຍເລກທີ 101/ສປສ ລົງວັນທີ 31 ກໍລະກົດ 1978 ວ່າດ້ວຍການຈັດຕັ້ງສະພາປະຊາຊົນ ແລະ ຄະນະກຳມະການປົກຄອງຂັ້ນຕ່າງໆ ຊຶ່ງປະກອບມີ 4 ຂັ້ນດັ່ງນີ້:

- ຂັ້ນແຂວງ: ມີແຂວງ ແລະ ນະຄອນຫຼວງ; ນະຄອນຫຼວງ ແບ່ງເປັນເມືອງ.

- ຂັ້ນເມືອງ: ມີເມືອງ ແລະ ເທດສະບານແຂວງ.

- ຂັ້ນຕາແສງ: ມີຕາແສງ ແລະ ເທດສະບານເມືອງ.

- ຂັ້ນບ້ານ: ມີບ້ານ, ບ້ານ ມີຄະນະປົກຄອງບ້ານ.

ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານແຂວງ, ຕາແສງ ແລະ ເທດສະບານເມືອງ ໄດ້ຈັດຕັ້ງມີສະພາປະຊາຊົນ ແລະ ຄະນະກຳມະການປົກຄອງປະຊາຊົນ; ຂັ້ນບ້ານ: ມີບ້ານ, ບ້ານມີຄະນະປົກຄອງບ້ານ. ສ່ວນວິຊາການດ້ານຕ່າງໆ ໄດ້ດຳເນີນການຄຸ້ມຄອງຕາມຂະແໜງການ ແລະ ຂຶ້ນກັບຄະນະກຳມະການປົກຄອງຂັ້ນນັ້ນໆ; ການພັດທະນາດ້ານວິຊາການ ແມ່ນກະຊວງກ່ຽວຂ້ອງຮັບຜິດຊອບ.

2). ການປົກຄອງທ້ອງຖິ່ນ ສປປ ລາວ ພາຍຫຼັງມີລັດຖະທຳມະນູນ: ພາຍຫຼັງສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ນຳໃຊ້ລັດຖະທຳມະນູນ 3 ສະບັບ. ສະບັບທຳອິດ ຖືກປະກາດໃຊ້ຕາມລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 55/ປທປທ, ລົງວັນທີ 15/8/ 1991 ແລະ ໄດ້ປ່ຽນແທນດ້ວຍສະບັບທີ 2 (ສະບັບປັບປຸງ) ທີ່ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 32/ສປປ ລາວ, ລົງວັນທີ 28/5/2003 ແລະ ປັດຈຸບັນລັດຖະທຳມະນູນ ສະບັບທີ 3 ໄດ້ຮັບການປັບປຸງ ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 214/ປປທ, ລົງວັນທີ 15/12/2015.

ລັດຖະທຳມະນູນສະບັບ 1991 ບັນຍັດວ່າ: “ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີແຂວງ, ກຳແພງນະຄອນ, ເມືອງ ແລະ ບ້ານ. ແຂວງ ແລະ ກຳແພງນະຄອນ ມີເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ; ເມືອງມີເຈົ້າເມືອງ; ບ້ານມີນາຍບ້ານ” ໃນຊ່ວງເວລານີ້ ຕາແສງຖືກລົບລ້າງ ເພື່ອຫຼຸດຜ່ອນຂອດລະຫວ່າງການລົງຂອດໜຶ່ງ.

ລັດຖະທຳມະນູນ ໄດ້ຖືກປັບປຸງໃຫ້ລະອຽດ ແລະ ແທດເໝາະກວ່າເກົ່າ; ສຳຄັນແມ່ນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະ ບັບເລກທີ 60/ສປປ ລາວ, ລົງວັນທີ 05 ພະຈິກ 2003, ໄດ້ຖືກຮັບຮອງເອົາ ແລະ ເປັນບາດກ້າວສຳຄັນໃນການເຄື່ອນໄຫວວຽກງານບໍລິຫານລັດຂັ້ນທ້ອງຖິ່ນ ຊຶ່ງໄດ້ກຳນົດຫຼັກກ່ຽວກັບການຈັດຕັ້ງ

ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກ ຂອງອົງການປົກຄອງທ້ອງຖິ່ນ ແນໃສ່ປັບປຸງ ແລະ ກໍ່ສ້າງອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບເອກະພາບໃນທົ່ວປະເທດ; ຮັບປະກັນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນ ງົບປະມານແຫ່ງລັດ; ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

- ການໝູນໃຊ້ແນວຄິດປະທານ ໄກສອນ ພົມວິຫານ ເຂົ້າໃນການປ່ຽນແປງໃໝ່ການປົກຄອງທ້ອງຖິ່ນຢູ່ ສປປ ລາວ: ການປ່ຽນ ແປງໃໝ່ການປົກຄອງທ້ອງຖິ່ນ ຢູ່ ສປປ ລາວ ຂອງພັກ-ລັດ ຊຶ່ງຖືວ່າເປັນບາດລ້ຽວໃໝ່ ຂອງການຈັດຕັ້ງທາງປົກຄອງຄືນໃໝ່ ເພື່ອໃຫ້ສອດຄ່ອງກັບຍຸກສະໄໝ ເຊັ່ນ: ການສືບຕໍ່ຈັດຕັ້ງຜັນຂະຫຍາຍແນວ ທາງປ່ຽນແປງໃໝ່ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ແຕ່ລະຄັ້ງຂອງພັກ. ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 21/ກມສພ ວ່າດ້ວຍທິດນຳ ແລະຫຼັກການຄຸ້ມຄອງຕາມຂະແໜງການ, ການປະກາດໃຊ້ລັດຖະທຳມະນູນ ປີ 1991 ແລະ ສະບັບປັບປຸງ ປີ 2003, ກົດໝາຍວ່າດ້ວຍລັດຖະບານ ປີ 1993 ແລະ ສະບັບປັບປຸງ ປີ 2003, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ປີ 2003 ແລະ ນິຕິກຳ, ລະບຽບການຕ່າງໆ ໃນການຈັດຕັ້ງຜັນຂະຫຍາຍມະຕິຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດອື່ນໆ. ຢູ່ໃນມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ ປີ 1991 ແລະກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ 7, ກົມການເມືອງສູນກາງພັກ ໄດ້ມີແຜນນະໂຍບາຍສືບຕໍ່ປັບປຸງ, ບູລະນະກົງຈັກການຈັດຕັ້ງຂອງພັກ-ລັດ ແລະໄດ້ສ້າງຕັ້ງຄະນະປັບປຸງກົງຈັກຂັ້ນສູນກາງ ເພື່ອຊ່ວຍໃນການຄົ້ນຄວ້າ, ວາງທິດທາງ ແລະ ແຜນການລະອຽດ ກ່ຽວກັບວຽກງານຈັດຕັ້ງ-ພະ ນັກງານ ຊຶ່ງຕາມທິດນຳແມ່ນເພື່ອຮັບປະກັນລັກສະນະສືບທອດ ແລະ ຂະຫຍາຍຕົວ, ຕ້ານແນວຄິດຮັກສາເດີມ, ຕ້ານແນວຄິດປະຕິເສດ ຜົນ ງານທີ່ຍາດມາໄດ້, ເຮັດເປັນບາດກ້າວ, ຮອບຄອບ, ລະມັດລະວັງ, ໜັກແໜ້ນ, ຮັບປະກັນຫຼັກການກະທັດຮັດ, ສົມເຫດສົມຜົນ ແລະມີປະສິດທິພາບ, ຮັບປະກັນສະຖຽນລະພາບຂອງປະເທດ, ສ້າງເງື່ອນ ໄຂໃຫ້ແກ່ການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ແລະ ຂົງເຂດ ອື່ນໆ, ເຊີດຊູຄຸນນະພາບ ແລະກຳລັງແຮງໃໝ່ ໃຫ້ທຸກອົງການຈັດຕັ້ງແມ່ນເພື່ອຮັບປະກັນຄວາມສັກສິດໃນການນຳພາຂອງພັກທົ່ວລະບົບການເມືອງ, ກຳນົດແຈ້ງພາລະບົດບາດນຳພາຂອງພັກ, ບົດບາດຄຸ້ມຄອງຂອງລັດ, ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ກຳນົດແຈ້ງສາຍພົວພັນມະຫາພາກ ແລະ ຈຸລະພາກຂອງບັນດາຫົວໜ່ວຍຮາກຖານ, ຮັບປະກັນຫຼັກການກະທັດຮັດ, ສົມເຫດສົມຜົນ ແລະ ເອົາຄຸນນະພາບໃນການເຄື່ອນໄຫວເປັນຕົ້ນຕໍ, ເຊີດຊູຄວາມຮັບຜິດຊອບຂອງການຈັດຕັ້ງທຸກຂັ້ນ ແລະ ຂອງພະນັກງານ-ລັດຖະ ກອນ, ຮັກສາໄດ້ຄວາມສາມັກຄີ ແລະ ຄວາມເປີກບານຫ້າວຫັນໃນວຽກງານ. ນອກຈາກນີ້ ພັກ ແລະ ລັດຖະບານ ຂອງພວກເຮົາ ໄດ້ສຸມໃສ່ປັບປຸງສະຖາບັນອຳນາດແຫ່ງລັດທັງສາມຢ່າງ ຄົບຊຸດ ຄື: ປ່ຽນຈາກສະພາປະຊາຊົນສູງສຸດ ມາເປັນສະພາແຫ່ງຊາດ ຊຶ່ງເຮັດໜ້າທີ່ຕົກລົງບັນຫາພື້ນຖານຂອງຊາດ ແລະ ຕິດຕາມ, ກວດກາການເຄື່ອນ ໄຫວຂອງລັດຖະບານ ແລະ ອົງການຕຸລາການ ກໍ່ຄືສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ໂດຍມີກົງຈັກແຕ່ສູນກາງລົງຮອດນະຄອນຫຼວງ-ແຂວງ ແລະ ເມືອງ, ໃນກຳລັງປະກອບອາວຸດ, ປ່ຽນຈາກສະພາລັດຖະມົນຕີ ມາເປັນລັດຖະບານ. ປີ 1991-2003 ໄດ້ດຳເນີນການປັບປຸງບັນດາອົງການຈັດຕັ້ງຕ່າງໆຄື:

+ ດ້ານການເມືອງແນວຄິດ: ໄດ້ເປີດກອງປະຊຸມເຜີຍແຜ່ໃຫ້ພະນັກງານການນຳ ຂອງບັນດາຂະແໜງການ ຮັບຮູ້ ແລະ ເຂົ້າໃຈແຈ້ງຄວາມຈຳເປັນ ຂອງການປັບປຸງບູລະນະກົງຈັກການຈັດຕັ້ງ. ພ້ອມກັນນັ້ນ, ກໍ່ໄດ້ຄົ້ນຄວ້າເຊື່ອມຊຶມເຖິງວິທີການ, ບາດກ້າວດຳເນີນການຕົວຈິງ ແລະ ໄດ້ລົງເລິກຂະແໜງການຢູ່ທ້ອງຖິ່ນ, ສ້າງຄວາມເຂັ້ມແຂງໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ, ບັນຫາການສ້າງສັງຄົມສາມັກຄີປອງດອງ, ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລໃຫ້ຄົບຖ້ວນ, ສັງລວມເອົາທັດສະນະແນວຄິດ, ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງປະທານ ໄກສອນ ພົມວິຫານ ແລະ ການນຳທ່ານອື່ນໆ ເພື່ອສ້າງພື້ນຖານແນວຄິດ, ທິດສະດີຂອງພັກເຮົາ ແລະ ເອົາເປັນພື້ນຖານສຳລັບການສຶດສອນ, ສຶກສາອົບຮົມ ແລະ ຝຶກຝົນຫຼໍ່ຫຼອມໃຫ້ແກ່ສະມາຊິກພັກ-ພະນັກງານ ຢູ່ຂັ້ນທ້ອງຖິ່ນຂອງຕົນ.

+ ດ້ານໂຄງປະກອບກົງຈັກການຈັດຕັ້ງ: ໂດຍປະຕິບັດຕາມທິດການປັບປຸງກົງຈັກການຈັດຕັ້ງ ທີ່ປະທານ ໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ: ກົງຈັກຕ້ອງກະທັດຮັດ, ເບົາບາງ ແລະ ເຂັ້ມແຂງນັ້ນ, ໃນປີ 1991 ຊຶ່ງເປັນປີດຽວກັນກັບການປະກາດໃຊ້ລັດຖະທຳມະນູນສະບັບທຳອິດຂອງ ສປປ ລາວ, ກົງຈັກການຈັດຕັ້ງ ໄດ້ຮັບການທົບທວນ ແລະ ປັບປຸງຄືນໃໝ່ ຊຶ່ງອົງການນິຕິບັນຍັດໄດ້ປ່ຽນຈາກສະພາປະຊາຊົນສູງສຸດ ມາເປັນສະພາແຫ່ງຊາດ ແລະ ລົບລ້າງສະພາປະຊາຊົນທ້ອງຖິ່ນ (ສະພາປະຊາຊົນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ). ພ້ອມນັ້ນ, ອົງການບໍລິຫານລັດຂັ້ນທ້ອງຖິ່ນ ກໍ່ໄດ້ຍຸບຂັ້ນຕາແສງ,

ຮັກສາໄວ້ 3 ຂັ້ນຄື: ແຂວງ, ເມືອງ ແລະ ບ້ານ; ໄດ້ຄົ້ນຄວ້າ ປ່ຽນແປງຮູບແບບການປົກຄອງ-ບໍລິຫານ ຈາກຮູບແບບຄະນະກຳ ມະການປົກ ຄອງ ໂດຍມີປະທານຄະນະກຳມະການປົກຄອງເປັນ ຫົວໜ້າ ມາເປັນຮູບແບບເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານ. ຕໍ່ ຈາກນັ້ນ ໃນປີ 1994 ຊຶ່ງເປັນໄລຍະທ້າຍ ຂອງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກ, ກົດໝາຍວ່າດ້ວຍການ ປົກຄອງທ້ອງຖິ່ນ ກໍ່ໄດ້ຮັບການສຶກສາ, ຄົ້ນຄວ້າ ແລະ ໄດ້ກາຍເປັນ ຮູບປະທຳ ພ້ອມທັງປະກາດໃຊ້ຢ່າງເປັນທາງການ ໃນປີ 2003 (ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ) ຊຶ່ງເຮັດໃຫ້ກົງຈັກ ຂອງ ອົງການປົກຄອງແຂວງ, ນະ ຄອນຫຼວງ ປະກອບດ້ວຍ: ຫ້ອງ ວ່າການປົກຄອງແຂວງ ແລະ ພະແນກຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳແຂວງ-ນະຄອນຫຼວງ, ກົງຈັກຂອງອົງການ ປົກຄອງເມືອງ ປະກອບດ້ວຍ: ຫ້ອງວ່າການປົກ ຄອງເມືອງ ແລະ ຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າປະຈຳເມືອງ, ກົງຈັກຂອງອົງການປົກຄອງເທດສະບານ ປະກອບດ້ວຍ: ຫ້ອງ ວ່າການປົກຄອງເທດສະບານ, ຫ້ອງການຂອງຂະແໜງການສາຍຕັ້ງ ແລະ ທຽບເທົ່າ, ຫ້ອງວິຊາການ ແລະ ໜ່ວຍງານບໍລິການ, ກົງຈັກ ຂອງອົງການປົກຄອງບ້ານ ປະກອບດ້ວຍ: ໜ່ວຍງານຊ່ວຍວຽກຈຳ ນວນໜຶ່ງ. ຍ້ອນເຫັນໄດ້ຄວາມສຳຄັນ ແລະ ຈຳເປັນຂອງການ ປັບປຸງກົງຈັກການຈັດຕັ້ງລັດ, ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ ໄດ້ຢືນ ຢັນຄວາມຈຳເປັນໃນການສືບຕໍ່ປັບປຸງກົງຈັກ ໃຫ້ມີຄວາມ ກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິຜົນ ໂດຍມີຄາດໝາຍລວມ ວ່າ: ປັບປຸງອົງ ການບໍລິຫານລັດທັງສູນກາງ ແລະທ້ອງຖິ່ນ ໃຫ້ມີ ຄວາມກະທັດຮັດ, ເຂັ້ມແຂງ ຮັບປະກັນໃຫ້ກົງຈັກມີສະຖຽນລະ ພາບ ເຄື່ອນໄຫວມີປະສິດທິຜົນສູງ, ສຳລັບຢູ່ຂັ້ນທ້ອງຖິ່ນນັ້ນ ແມ່ນ ຕ້ອງໄດ້ຄົ້ນຄວ້າປັບປຸງອົງການປົກຄອງທ້ອງຖິ່ນຄືນໃໝ່ ໃຫ້ ຖືກຕ້ອງຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ເງື່ອນໄຂການ ສ້າງຕັ້ງຕາມກົດໝາຍກຳນົດເທື່ອລະກ້າວ ເພື່ອຮັບປະກັນໃຫ້ແຂວງ, ເມືອງ ແລະ ບ້ານ ມີຄວາມສາມາດພຽງພໍໃນການພັດທະນາ ທ້ອງຖິ່ນ ດ້ວຍການປັບປຸງ, ສັບຊ້ອນຄືນໃໝ່ບາງຫ້ອງການ ຂອງ ຂະແໜງການສາຍຕັ້ງຈຳນວນໜຶ່ງຢູ່ຂັ້ນເມືອງ ຕາມທິດຫ້ອງການໜຶ່ງ ເຮັດຫຼາຍວຽກ; ມີຫຼາຍກະຊວງຊີ້ນຳ, ການສ້າງຕັ້ງກົງຈັກຢູ່ຂັ້ນ ທ້ອງຖິ່ນ ແມ່ນໃຫ້ອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກ ງານ ແລະ ອີງໃສ່ສະພາບຈຸດພິເສດຂອງແຕ່ລະທ້ອງຖິ່ນ. ບາງ ກໍລະນີ ບໍ່ຈຳເປັນຕ້ອງເຮັດເປັນເອກະພາບກັນໝົດທຸກທ້ອງຖິ່ນ ແລະ ກໍ່ບໍ່ຈຳເປັນຕ້ອງຈັດຕັ້ງໃຫ້ມີຄືກັນກັບກົງ ຈັກການຈັດຕັ້ງຢູ່ຂັ້ນ ເທິງ ບົນພື້ນຖານທິດຊີ້ນຳດັ່ງກ່າວ, ລັດຖະບານໄດ້ອອກຄຳສັ່ງ ວ່າ ດ້ວຍການໃຫ້ເຮັດທົດລອງປັບປຸງກົງຈັກການ ຈັດຕັ້ງຂັ້ນເມືອງ ໃນ ຂອບເຂດທົ່ວປະເທດ ຕາມທິດໂຮມບັນດາຫ້ອງການ ຫຼື ການຈັດຕັ້ງ ຕ່າງໆ ທີ່ມີພາລະບົດບາດ, ໜ້າທີ່ຄ້າຍຄືກັນ ຫຼື ມີວຽກແຕ່ບໍ່ຫຼາຍ ແລະ ບໍ່ສັບສົນ ເຂົ້າກັນ; ຜ່ານການປັບປຸງກົງຈັກການຈັດຕັ້ງຂັ້ນເມືອງ ຢ່າງມີການດັດປັບ, ປ່ຽນແປງວິທີການ ແລະ ຮູບແບບ ໃຫ້ສອດຄ່ອງ ກັບສະພາບຄວາມເປັນຈິງ.

+ ດ້ານການສັບຊ້ອນ-ຈັດວາງ: ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ຈຶ່ງໄດ້ຄົ້ນຄວ້າ ແລະ ຮັບຮອງເອົາມະຕິຕົກລົງຂອງກົມ ການເມືອງສູນກາງພັກເລກທີ 03/ກມສພ ວ່າດ້ວຍສ້າງແຂວງເປັນຫົວ ໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາເພື່ອເສີມຂະຫຍາຍທ້ອງຖິ່ນ, ເຮັດ ໃຫ້ການບໍລິຫານ ແລະ ການຄຸ້ມຄອງລັດມີຄວາມຄ່ອງຕົວ ໂດຍຕິດ ພັນກັບເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs) ໃນປີ 2015, ເປົ້າໝາຍການພັດທະນາແບບຍືນຍົງ (SDGs), ລຶບ ລ້າງ ຄວາມທຸກຍາກຂອງປະຊາຊົນ ແລະເຮັດໃຫ້ປະເທດຊາດຫຼຸດພົ້ນອອກ ຈາກສະຖານະພາບດ້ອຍພັດທະນາ ໃນປີ 2020. ເນື້ອແທ້ຂອງມະຕິ 3 ສ້າງ ແມ່ນການແບ່ງຄວາມຮັບຜິດຊອບຄຸ້ມຄອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບຕາມທິດຫັນກະຊວງ-ອົງ ການຂັ້ນສູນ ກາງ ປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ, ເພີ່ມສິດ ແລະ ເພີ່ມ ຄວາມຮັບຜິດຊອບໃຫ້ແກ່ຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການຫຼາຍຂຶ້ນ ແລະ ມີຄວາມຮັບຜິດຊອບເພີ່ມຂຶ້ນຕິດພັນກັບ ການໄດ້ຮັບຜົນປະໂຫຍດຢ່າງເໝາະສົມ. ຍ້ອນແນວນັ້ນ ຈຶ່ງໄດ້ກຳນົດ ເອົາ 15 ກະຊວງ, ນະຄອນຫຼວງວຽງຈັນ ແລະ ທຸກໆແຂວງ ໃນຂອບ ເຂດທົ່ວປະເທດ ແລະ ກຳນົດເອົາ 52 ເມືອງ, 109 ບ້ານ ເປັນເປົ້າໝ າຍເຮັດທົດລອງ 3 ສ້າງ.

ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ກຳນົດກ່ຽວກັບຂົງ ເຂດອຳນາດລັດ ໂດຍການສ້າງຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕ ປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ, ເພີ່ມນິຕິທຳໃນການປົກຄອງ ແລະ ເພີ່ມປະສິດທິພາບ ຂອງການບໍລິຫານລັດ, ສືບຕໍ່ປະຕິບັດທິດນຳ ຍຸດທະສາດ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງ ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍ ພັດທະນາ. “ການສ້າງຄວາມໝັ້ນຄົງໃຫ້ແກ່ລັດປະຊາທິປະໄຕ ປະຊາຊົນແມ່ນການສ້າງໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ແລະ ຕ້ອງດຳເນີນໄປບົນພື້ນຖານຢຶດໝັ້ນຫຼັກການທີ່ວ່າ ພັກນຳພາ ແລະ ກຳ ອຳນາດຕາມກົດໝາຍ, ລັດຄຸ້ມຄອງສັງຄົມດ້ວຍກົດໝາຍ, ປະຊາຊົນ

ເປັນເຈົ້າສະເໜີພາບຕໍ່ໜ້າກົດໝາຍ, ສົມທົບແໜ້ນ ລະຫວ່າງ ການ ເພີ່ມປະສິດ ທິພາບ ຂອງການບໍລິຫານລັດຂັ້ນສູນກາງ ກັບການ ສືບຕໍ່ປະຕິບັດທິດນຳ 3 ສ້າງ ຢ່າງແຂງແຮງ" (ວາລະສານອາລຸນໃໝ່, 2016, ໜ້າ46) ຫຼື ເວົ້າອີກຢ່າງໜຶ່ງ ແມ່ນໄລຍະຜັນຂະຫຍາຍວຽກ ງານ 3 ສ້າງ ໃຫ້ກວ້າງອອກໃນຂອບເຂດທົ່ວປະເທດ. ລັດຖະບານ ໄດ້ມອບໃຫ້ກະຊວງພາຍໃນ ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຕິດຕາມ, ຊຸກຍູ້ການຈັດຕັ້ງຜັນຂະຫຍາຍວຽກງານ 3 ສ້າງ ໃນທົ່ວປະເທດ.

III. ເສີມຂະຫຍາຍແນວຄິດ ກ່ຽວກັບການປົກຄອງ ທ້ອງຖິ່ນ ໃນນິພົນ ໄກສອນ ພົມວິຫານ.

- ເສີມຂະຫຍາຍແນວຄິດ ປະທານ ໄກສອນ ພົມວິຫານ ເຂົ້າ ໃນການແບ່ງຂັ້ນຄຸ້ມຄອງ: ແນວຄິດ ໄກສອນ ພົມວິຫານ ກ່ຽວກັບ ອົງການບໍລິຫານລັດຂັ້ນທ້ອງຖິ່ນ ພວກເຮົາຕ້ອງໄດ້ສືບຕໍ່ຄົ້ນຄວ້າ, ເສີມຂະຫຍາຍ ແລະ ເອົາໃຈໃສ່ບາງບັນຫາ ດັ່ງນີ້:

ໜຶ່ງ, ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍແນວຄິດໄກສອນ ພົມວິຫານ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ: ໂດຍກຳນົດ ກົງຈັກການຈັດ ຕັ້ງຂອງເມືອງ ບົນພື້ນຖານຄວາມເປັນຈິງຂອງແຕ່ ລະທ້ອງຖິ່ນ ໂດຍບໍ່ໃຫ້ປະຕິບັດຕາມທັດສະນະທີ່ວ່າ ສູນກາງ ແລະ ແຂວງມີກົງຈັກຄືແນວໃດ ເມືອງກໍ່ຕ້ອງມີກົງຈັກຄືແນວນັ້ນ, ການ ກຳນົດກົງຈັກຕ້ອງເລີ່ມແຕ່ໜ້ອຍຫາຫຼາຍ ໂດຍເລີ່ມຈາກວຽກງານທີ່ ມີຄວາມສຳຄັນ ແລະ ຈຳເປັນສາກ່ອນ, ສຳລັບວຽກງານອື່ນທີ່ຍັງບໍ່ ທັນຂະຫຍາຍຕົວສູງນັ້ນ ບໍ່ຄວນຮີບຮ້ອນສ້າງຕັ້ງຂຶ້ນມາ. ໃນຈຸດນີ້ ບໍ່ໄດ້ໝາຍຄວາມວ່າ ວຽກອື່ນທີ່ຍັງບໍ່ທັນຂະຫຍາຍຕົວສູງນັ້ນ ຈະບໍ່ ມີການໃຫ້ບໍລິ ການຢູ່ເມືອງ ພຽງແຕ່ບໍ່ໃຫ້ຈັດຕັ້ງເປັນກົງຈັກ ສະເພາະ ແຕ່ຄວນສັບຊ້ອນວຽກເຫຼົ່ານັ້ນ ໃຫ້ພາກສ່ວນໃດໜຶ່ງ ຮັບຜິດຊອບກ່ອນ. ໃນຕໍ່ໜ້າເມື່ອເສດຖະກິດ-ສັງຄົມ ຫາກມີການ ຂະຫຍາຍຕົວສູງຂຶ້ນ ແລະຮຽກຮ້ອງໃຫ້ມີໜ່ວຍງານຮັບຜິດຊອບ ສະເພາະ ຈຶ່ງຄ່ອຍສະເໜີສະພາປະຊາຊົນທ້ອງຖິ່ນຮັບຮອງ ແລະ ສ້າງຕັ້ງຂຶ້ນຕາມພາຍຫຼັງ. ທັງນີ້ ກໍ່ເນື່ອງຈາກວ່າກົງຈັກຂອງເມືອງ ອາດບໍ່ມີຄວາມເໝາະສົມຖ້າຫາກຈັດຕັ້ງຄືກັນ ແລະ ມີຂະໜາດເທົ່າ ກັນໝົດທຸກເມືອງ ເພາະບໍລິມາດວຽກຕົວຈິງ ຂອງແຕ່ລະຂະແໜ ງການຢູ່ຂັ້ນເມືອງ ມີລະດັບທີ່ແຕກຕ່າງກັນ ຫຼື ບາງຂະແໜງການ ວຽກງານຕົວຈິງຍັງບໍ່ທັນມີ, ພ້ອມກັນນັ້ນ ມັນກໍ່ຍັງເປັນສາເຫດຂອງ ການສິ້ນເປືອງງົບປະມານໃນການກໍ່ສ້າງພື້ນຖານວັດຖຸ (ສຳນັກງານ ຫ້ອງການ), ຕຳແໜ່ງບໍລິ ຫານ ແລະ ພະນັກງານ ທີ່ຕ້ອງໄດ້ ປະກອບເຂົ້າໃສ່ໃນຂະແໜງການທີ່ບໍ່ຈຳເປັນ, ໃນທາງກົງກັນຂ້າມ ຂະແໜງການທີ່ມີຄວາມຈຳເປັນ ຂໍ້ ພັດຂາດແຄນພະນັກງານ.

ສອງ, ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ: ການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ແມ່ນຄວາມຈຳເປັນພາວະວິໄສທີ່ ຕ້ອງໄດ້ເຮັດໃຫ້ຖືກຕ້ອງ, ສອດຄ່ອງ ກັບລະດັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມຂອງປະເທດ ໃນແຕ່ລະໄລຍະ. ການແບ່ງ ຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຫາກມີຄວາມ ຖືກຕ້ອງ, ສອດຄ່ອງ, ກົມກຽວກັນດີເທົ່າໃດ ມັນຍິ່ງເປັນການກະ ຕຸກ ຊຸກຍູ້ໃຫ້ການຄຸ້ມຄອງບໍລິຫານລັດ ມີປະສິດທິພາບ, ປະສິດທິຜົນດີ ຂຶ້ນເທົ່ານັ້ນ. ດ້ວຍເຫດນັ້ນ, ໃນຕໍ່ໜ້ານີ້ ພວກເຮົາຄວນສືບຕໍ່ແບ່ງຂັ້ນ ຄຸ້ມຄອງ ຕາມທິດສູນກາງຄຸ້ມຄອງມະຫາພາກ: ລັດຖະບານເປັນຜູ້ກຳ ນົດແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ກວມລວມ ທົ່ວປະເທດ, ຕິດຕາມ ກວດກາການປະຕິບັດໜ້າທີ່ຂອງທ້ອງຖິ່ນຮາກ ຖານເປັນຕົ້ນຕໍ, ພ້ອມທັງເປັນຜູ້ຊີ້ນຳ, ບັນຊາຄວບຄຸມໂດຍກົງ, ເດັດຂາດ ແລະ ຮອບດ້ານ ວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ, ວຽກງານອະທິປະໄຕຂອງຊາດ ໄປພ້ອມກັບການເສີມ ຂະຫຍາຍສິດເປັນເຈົ້າ, ຄວາມຮັບຜິດຊອບຢ່າງຈະແຈ້ງ, ຂາດຕົວ ແລະສົມຄູ່ກັບຄວາມສາມາດຕົວຈິງຂອງທ້ອງຖິ່ນ ຕາມທິດສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະສ້າງບ້ານເປັນຫົວໜ່ວຍພັດທະນາ.

- ເສີມຂະຫຍາຍແນວຄິດປະທານ ໄກສອນ ພົມວິຫານ ເຂົ້າ ໃນການຫັນການປົກຄອງທ້ອງຖິ່ນເຂົ້າສູ່ລະບຽບກົດໝາຍ: ໂດຍ ປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ, ການຄຸ້ມຄອງລັດ, ຄຸ້ມຄອງ ສັງຄົມດ້ວຍກົດໝາຍ ໄດ້ມີຜົນສຳເລັດຢ່າງຕັ້ງໜ້າ, ການຈັດຕັ້ງກົງຈັກ ລັດນັບມື້ນັບໄດ້ຮັບການບູລະນະໃຫ້ສົມບູນ, ຮູບການເຄື່ອນໄຫວ ຂອງລັດໄດ້ມີການປັບປຸງປ່ຽນແປງໃໝ່; ລັດຄຸ້ມຄອງສັງຄົມດ້ວຍກົດ ໝາຍເປັນຕົ້ນຕໍ, ໄດ້ມີການກຳນົດແຜນຍຸດທະສາດ, ແຜນການ, ກົນ ໄກ, ນະໂຍບາຍ ແລະ ແຫຼ່ງກຳລັງຕ່າງໆຂອງລັດ, ສືບຕໍ່ຮັບປະກັນໃຫ້ ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງທີ່ໝັ້ນຄົງ ແລະ ມີ ຄວາມປອດໄພທາງສັງຄົມຢ່າງໜັກແໜ້ນ. ລັກສະນະລັດປະຊາທິປະ ໄຕປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ສະແດງອອກຢ່າງ ຈະແຈ້ງ: ລະບົບການປົກຄອງ ໄດ້ຮັບການບູລະນະໄປຕາມທິດເສີມ ສ້າງຄວາມສາມາດການຄຸ້ມຄອງມະຫາພາກ ຂອງສູນກາງ ແລະ ຄວາມ ເປັນເຈົ້າການຂອງທ້ອງຖິ່ນ, ຮາກຖານ; ສິດທິຂອງພົນລະເມືອງມີການ ຮັບປະກັນດ້ວຍການຄຸ້ມຄອງລັດຕາມກົດໝາຍທີ່ສັກສິດ, ປະຊາຊົນ ບັນດາເຜົ່າ ມີຄວາມສາມັກຄີປອງດອງເປັນປຶກແຜ່ນ, ສັງຄົມມີປະຊາ

ທີ່ປະໄຕ, ມີຄວາມຍຸຕິທຳ ແລະ ສີວິໄລ; ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຕາມຄວາມຕ້ອງການ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ; ເຊື່ອມໂຍງ ແລະເຊື່ອມຈອດຢ່າງກວ້າງຂວາງກັບພາກພື້ນ ແລະ ສາກົນ, ມີຄວາມສາ ມາດແກ້ງແຍ້ງແຂ່ງຂັນໃນດ້ານຕ່າງໆກັບພາຍໃນຫຼາຍຂຶ້ນ.

- ເສີມຂະຫຍາຍແນວຄິດປະທານ ໄກສອນ ພົມວິຫານ ເຂົ້າໃນການປ່ຽນແປງໃໝ່ ການປົກຄອງທ້ອງຖິ່ນ ຢຸ່ ສປປ ລາວ: ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ກ່າວວ່າ: “ປັບປຸງ ການຈັດຕັ້ງ, ກົງຈັກບໍລິຫານຢູ່ທ້ອງຖິ່ນ ໃຫ້ສາມາດເປັນເຈົ້າການວາງແຜນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານຂອງລັດ; ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງຂັ້ນບໍລິຫານ ປົກຄອງຕ່ຳສຸດຄືນໃໝ່ໃຫ້ເໝາະສົມ ເພື່ອສ້າງຄວາມເຂັ້ມແຂງຂອງລະບົບບໍລິຫານລັດຢູ່ຂັ້ນຮາກຖານ; ສືບຕໍ່ສ້າງ ແລະປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ລະບຽບບໍລິຫານລັດທີ່ຈຳເປັນ ເພື່ອເປັນບ່ອນອີງໃຫ້ແກ່ການຍົກສູງຄຸນນະພາບ ການເຄື່ອນໄຫວ ແລະ ການບໍລິ ການຮັບໃຊ້ປະຊາຊົນ ຂອງອົງການບໍລິຫານລັດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ, ແກ້ໄຂປາກົດການສວຍໃຊ້ໜ້າທີ່ ກົດໜ່ວງ, ຖ່ວງດຶງການພັດທະນາ ກໍ່ຄືບັນດາຄະດີສໍ້ລາດບັງຫຼວງ ຂອງເຈົ້າໜ້າທີ່ລັດ ຕາມກົດໝາຍຢ່າງເດັດຂາດ, ເພີ່ມທະວີຄວາມຮັບຜິດຊອບ ໃນການ ດຳເນີນການກວດສອບ ຂອງບັນດາຫົວໜ່ວຍທີ່ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດ; ປັບປຸງ, ແກ້ໄຂມາດຕະການແນະນຳຈາກຜົນການກວດສອບໃຫ້ເຂັ້ມງວດ, ເດັດຂາດ ແລະ ທັນເວລາຕາມກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດ” (ອາລະສານອາລຸນໃໝ່, 2021, ໜ້າ 76-77).

ສະຫຼຸບລວມ, ແນວຄິດກ່ຽວກັບການປົກຄອງທ້ອງຖິ່ນ ໃນນິພົນ ໄກສອນ ພົມວິຫານ ແມ່ນເປັນພື້ນຖານທິດສະດີ ແລະ ທັງເປັນການໝູນໃຊ້ທິດສະດີດັ່ງກ່າວຢ່າງມີວິທະຍາສາດ, ເປັນການສ້າງເງື່ອນໄຂຊຸກຍູ້ໃຫ້ອົງການບໍລິຫານລັດຂັ້ນທ້ອງຖິ່ນ ສາມາດເສີມຂະຫຍາຍບົດບາດ ແລະ ຄວາມເປັນເຈົ້າການຂອງຕົນ ໃນການຂຸດຄົ້ນທຸກທ່າແຮງບໍ່ມຊ້ອນຂອງທ້ອງຖິ່ນ ເພື່ອພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ປະກອບສ່ວນພັດທະນາປະເທດຊາດ. ດັ່ງນັ້ນ, ພວກເຮົາຕ້ອງສືບຕໍ່ຄົ້ນຄວ້າ, ສຶກສາຮ່ຳຮຽນ ແລະ ເສີມຂະຫຍາຍແນວຄິດ ໄກສອນ ພົມວິຫານ ກ່ຽວກັບການປົກຄອງທ້ອງຖິ່ນ ໃຫ້ອຸດົມສົມບູນ ແລະ ເປັນເຈົ້າການໃນການປະຕິບັດໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ເພື່ອຕອບສະໜອງກັບໜ້າທີ່ການເມືອງໃນໄລຍະໃໝ່ ໃຫ້ມີຄຸນນະພາບຂຶ້ນໄປເລື້ອຍໆ.

ເອກະສານອ້າງອີງ

ຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາມາດຕະຖານການຈັດປະເພດເມືອງ ແລະ ກົງຈັກການຈັດຕັ້ງຂັ້ນເມືອງໃນທົ່ວປະເທດ ສະບັບເລກທີ 03/ຄປອລ, ລົງວັນທີ 21/1/2009.

ພົມວິຫານ, ກ. (2005). *ນິພົນເລືອກເຟັ້ນ ເຫຼັ້ມ 4*.

ພົມວິຫານ, ກ. (1997). *ນິພົນເລືອກເຟັ້ນ ເຫຼັ້ມ 3*.

ພົມວິຫານ, ກ. (1987). *ນິພົນເລືອກເຟັ້ນ ເຫຼັ້ມ 2*.

ພົມວິຫານ, ກ. (1984, ວັນທີ 6 ມັງກອນ). *ບົດຄວາມເຫັນ ກ່ຽວກັບການແບ່ງງານ, ແບ່ງຂັ້ນຄຸ້ມຄອງເສດຖະກິດ*.

ອາລະສານອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ*.

ອາລະສານອາລຸນໃໝ່. (2016). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ*.